**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ 34023 /ຍທຂ
ນະຄອນຫຼວງວຽງຈັນ, ວັນທີ 26 ພະຈິກ 2024

# ຂໍ້ຕົກລົງ
# ວ່າດ້ວຍການປັບປຸງບາງມາດຕາຂອງ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ວິຊາຊີບ ຂອງສະຖາປະນິກ ແລະ ວິສະວະກອນໂຍທາ

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 677/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງວິຊາຊີບ ຂອງສະຖາປະນິກ ແລະ ວິສະວະກອນໂຍທາ ສະບັບເລກທີ 10420/ຍທຂ, ລົງວັນທີ 10 ພຶດສະພາ 2024;
- ອີງຕາມ ການເຫັນດີເປັນເອກະພາບ ໃນກອງປະຊຸມສະພາສະຖາປະນິກ ອາຊຽນ ຄັ້ງທີ 44 ໃນວັນທີ 13 ພະຈິກ 2023;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 32628/ຫກ, ລົງວັນທີ 19 ພະຈິກ 2024.

## ລັດຖະມົນຕີ ອອກຂໍ້ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດເນື້ອໃນການປັບປຸງບາງມາດຕາຂອງ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງວິຊາຊີບ ຂອງສະຖາປະນິກ ແລະ ວິສະວະກອນໂຍທາ ເພື່ອໃຫ້ສອດຄ່ອງກັບສະພາບການຕົວຈິງໃນປັດຈຸບັນ ແລະ ເປີດໂອກາດໃຫ້ສະຖາປະນິກໃນປະເທດສະມາຊິກເຂົ້າເປັນສະຖາປະນິກອາຊຽນໄດ້ໂດຍໄວຂຶ້ນ.

**ມາດຕາ 2 ມາດຕາຂໍ້ຕົກລົງທີ່ມີການປັບປຸງ**

ເນື້ອໃນມາດຕາ ຂອງຂໍ້ຕົກລົງ ທີ່ມີການປັບປຸງ ມີດັ່ງນີ້: ມາດຕາ 8 ເງື່ອນໄຂຂອງສະຖາປະນິກລາວ ທີ່ສະໝັກເປັນສະຖາປະນິກອາຊຽນ, ສະຖາປະນິກລາວ ທີ່ສະໝັກເປັນສະຖາປະນິກອາຊຽນ ຕ້ອງມີເງື່ອນໄຂດັ່ງນີ້:

1. ຮຽນຈົບຈາກສະຖາບັນການສຶກສາ ສາຂາວິຊາສະຖາປັດຕະຍະກຳ ຂັ້ນປະລິນຍາຕີ ຂຶ້ນໄປ;
2. ເປັນສະມາຊິກ ຂອງສະມາຄົມສະຖາປະນິກ ແລະ ວິສະວະກອນກໍ່ສ້າງ ລາວ;
3. ມີປະສົບປະການຜ່ານງານຢ່າງໜ້ອຍ ເຈັດ ປີ ຫຼັງຈາກຮຽນຈົບ;
4. ມີໃບຢັ້ງຢືນປະກອບອາຊີບ ຢ່າງໜ້ອຍ ຫ້າ ປີ;
5. ປະກອບວິຊາຊີບທາງດ້ານສະຖາປັດຕະຍະກຳຢູ່ໂຄງການໃຫຍ່ ຢ່າງໜ້ອຍສອງປີ;

6. ມີການພັດທະນາວິຊາຊີບແບບຕໍ່ເນື່ອງ ຊຶ່ງໄດ້ມີຄະແນນລະດັບດີ;
7. ມີຈັນຍາບັນຕໍ່ວິຊາຊີບຂອງຕົນ;
8. ຮູ້ພາສາອັງກິດ ລະດັບດີ.

**ມາດຕາ 3 ການປ່ຽນແທນເນື້ອໃນບາງມາດຕາຂອງຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ ປ່ຽນແທນເນື້ອໃນ ມາດຕາ 8 ຂໍ້ທີ 3 ຄື ມີປະສົບປະການຜ່ານງານຢ່າງໜ້ອຍ ສິບ ປີ ຫຼັງຈາກຮຽນຈົບ ປັບປຸງມາເປັນ ມີປະສົບປະການຜ່ານງານຢ່າງໜ້ອຍ ເຈັດ ປີ ຫຼັງຈາກຮຽນຈົບ.

**ມາດຕາ 4 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງລົງຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

ງາມປະສົງ ເມືອງມະນີ